ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ຈຳປາສັກ

ເລກທີ 453/ຈຂ.ຈສ

ແຂວງຈຳປາສັກ, ວັນທີ 10 ພຶດສະພາ 2018

# ຂໍ້ຕົກລົງ

## ວ່າດ້ວຍການປະກາດສ້າງຕັ້ງນະຄອນປາກເຊ ທີ່ແຂວງຈຳປາສັກ

- ອີງຕາມກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14/12/2015.
- ອີງຕາມດຳລັດນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 128/ນຍ, ລົງວັນທີ 11/4/2018 ວ່າດ້ວຍການສ້າງຕັ້ງນະຄອນປາກເຊ.
- ອີງຕາມໃບສະເໜີຂອງ ເມືອງປາກເຊ ສະບັບເລກທີ 032/ຈມ,ປຊ, ລົງວັນທີ 02/5/2018.

ເຈົ້າແຂວງ ຈຳປາສັກ ອອກຂໍ້ຕົກລົງ:

**ມາດຕາ 1** ອະນຸມັດໃຫ້ປະກາດສ້າງຕັ້ງນະຄອນປາກເຊ ທີ່ແຂວງຈຳປາສັກ ໃນວັນທີ 31 ພຶດສະພາ 2018.

**ມາດຕາ 2** ມອບໃຫ້ ຄະນະຮັບຜິດຊອບການປະກາດສ້າງຕັ້ງນະຄອນປາກເຊ, ເມືອງປາກເຊ ແລະ ພະແນກພາຍໃນແຂວງ ປະສານສົມທົບກັນ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ ແລະ ລາຍງານຄວາມຄືບໜ້າຂອງການກະກຽມຄວາມພ້ອມໃຫ້ການນຳແຂວງ ຮັບຊາບໃນແຕ່ລະໄລຍະ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ແຂວງຈຳປາສັກ

ເຈົ້າແຂວງ

ປອ. ບຸນທອງ ດີວີໄຊ